ສະບັບທີ 01, ຊຸດທີ 01 (2026); 76-84

ວາລະສານວິທະຍາສາດການເມືອງ-ການປົກຄອງ
www.jnappa.lci.la; ISSN: 3107-1163; E-ISSN: 3107-1171
DOI:https://doi.org/10.71026/jnappa.2026.010101



ພັດທະນາພື້ນຖານເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ

Developing the Foundation of Market Economy Based on Socialist Path

ສີລ່າວ ໂຊ້ຕູ້ກີ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ
E-mail:suelaosotouky@gmail.com

ປະຫວັດຫົວຂໍ້ຄົ້ນຄວ້າ

ໄດ້ຮັບ: 30 ພຶດສະພາ 2025
ໄດ້ຮັບພາຍຫຼັງປັບປຸງ: 10 ກັນຍາ 2025
ຖືກຮັບຮອງ:15 ຕຸລາ 2025
ຈັດພິມອອນລາຍ: 18 ມີຖຸນາ 2026

ບົດຄັດຫຍໍ້:

ນັບແຕ່ປີ 1986 ເປັນຕົ້ນມາ, ພັກປະຊາຊົນປະຕິວັດລາວ ໄດ້ວາງແນວທາງການປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການ ໂດຍສະເພາະແມ່ນແນວທາງປ່ຽນແປງໃໝ່ທາງດ້ານເສດຖະກິດ, ປ່ຽນແປງນະໂຍບາຍໂຄງປະກອບພາກສ່ວນເສດຖະກິດ ເຂົ້າໃນການຜະລິດສິນຄ້າ ແລະ ການບໍລິການ, ລົບລ້າງກົນໄກເກົ່າ ແລະ ນຳໃຊ້ກົນໄກເສດຖະກິດຕະຫຼາດທີ່ມີການນຳພາຂອງ ພັກ ແລະ ຄຸ້ມຄອງຂອງລັດ, ພັດທະນາການພົວພັນສິນຄ້າ-ເງິນຕາ ແລະ ລະບົບຕະຫຼາດ ເປັນ ຕົ້ນແມ່ນຕະຫຼາດທຶນ, ຕະຫຼາດແຮງງານ, ຕະຫຼາດອຸປະໂພກ-ບໍລິໂພກ, ພາຫະນະການຜະລິດ, ຕະ ຫຼາດຂໍ້ມູນຂ່າວສານ ແລະອື່ນໆ, ສາມາດຮັບປະກັນໄດ້ການຜະລິດທຸລະກິດ ແລະ ມີວຽກ ເຮັດງານທຳໃດໜຶ່ງທີ່ໝັ້ນຄົງ...; ການພັດທະນາເສດຖະກິດຕະຫຼາດ ແມ່ນແນໃສ່ເພື່ອປົດປ່ອຍ ກຳລັງການຜະລິດ, ຊຸກຍູ້ການແບ່ງງານສັງຄົມ, ສ້າງໂຄງປະກອບເສດຖະກິດສິນຄ້າຫຼາຍພາກ ສ່ວນຕາມທິດສັງຄົມນິຍົມ, ນະໂຍບາຍສິນຄ້າຕາມກົນໄກຕະຫຼາດ ເພື່ອສົ່ງເສີມໃຫ້ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນໃນຂະແໜງການຕ່າງໆ ເພື່ອຕອບສະໜອງຄວາມ ຮຽກຮ້ອງຕ້ອງການ ໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ເຮັດໃຫ້ເສດຖະກິດມີ ບາດກ້າວຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການ ປັບປຸງນັບມື້ນັບດີຂຶ້ນເປັນກ້າວໆ, ເຮັດໃຫ້ປະເທດຊາດເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ໃນໄລຍະຜ່ານມາ, ຈຸດພື້ນເດັ່ນ ແມ່ນສາມາດສ້າງໄດ້ພື້ນຖານການຜະລິດເປັນສິນຄ້າ ເຕີບໃຫຍ່ຂະຫຍາຍຕົວ ກາຍເປັນໜ່ໍແໜງເສດຖະກິດຕະຫຼາດຂຶ້ນ ໃນລະດັບກ້ວາງຂວາງສົມ ຄວນ, ພ້ອມນັ້ນ ແມ່ນຕະຫຼາດປະເພດຕ່າງໆ ໃນລະບົບຕະຫຼາດອັນຄົບຊຸດ ໄດ້ຄ່ອຍກຳເນີດ ຂຶ້ນເປັນກ້າວໆ ໃນລະດັບທີ່ແຕກຕ່າງກັນ; ບັນດານິຕິກຳຮັບຮອງການເຄື່ອນໄຫວສ້າງ ແລະ ດຳ ເນີນທຸລະກິດໃນລະເສດຖະກິດຕະຫຼາດ ໄດ້ຮັບການປັບປຸງ ແລະພັດທະ ນາເປັນລະບົບຄົບ ຊຸດ; ການພັດທະນາພື້ນຖານເສດຖະກິດຕະຫຼາດນັ້ນ, ໄດ້ເກີດມີປະເພດຕະຫຼາດຕ່າງໆທີ່ປາກົດ ຕົວຂຶ້ນ ແລະ ຂະຫຍາຍຕົວໄວກວ່າໝູ່ແມ່ນຕະຫຼາດສິນຄ້າ ແລະ ບໍລິການ ນັບທັງພາຫະນະ ການຜະລິດ ແລະ ການຊົມໃຊ້.

ຄຳສັບສຳຄັນ: ເສດຖະກິດຕະຫຼາດ, ພື້ນຖານເສດຖະກິດ, ທິດສັງຄົມນິຍົມ,

Abstract:

The new mission in Lao PDR has been initiated since 1986. The Lao People's Revolutionary Party has laid out a comprehensive new change policy with principles, especially the new way of changing the economy, Change the structural policy of the economic sector into the production of goods and services. Eliminate the old mechanism and use the market economy mechanism that is led by the party and managed by the state, Develop markets and market systems, such as capital markets, labor markets, consumer markets, production vehicles, information markets for the society which can guarantee business production and have a stable job...; The development of the nation is aimed at freeing the productive forces, encouraging the social division of labor, creating a multi-part economic structure according to the social direction. Commodity policy based on market mechanism to encourage domestic and foreign investors to invest in various sectors to produce goods for domestic consumption and export to meet the demands of the socio-economic development of the nation, which can make the country's economy grow continuously, the living conditions of the people of the ethnic groups have been gradually improved day by day, make the nation strong, the people rich and happy, the society democratic, fair and colorful.

In the process of developing the market economy based on socialism, In the new transformation mission of the Lao PDR in the past; The outstanding point is to be able to create a production base as a product, has sprouted and grown on a fairly wide scale; There are also different types of markets, In the complete market system, it is gradually born at different levels; Legislations approving the creation and operation of business in a market economy have been updated and developed as a complete system; Overall, in the development of the market economy. There have been various types of markets that have emerged and are growing faster than the market for goods and services, what is exchanged are goods and services, including both production and consumption.

Key words: Market Economy, Economic Foundation, Socialism Path.

ຈຸດປະສົງຂອງການຄົ້ນຄວ້າ: ການຄົ້ນຄວ້ານີ້ມີຈຸດປະສົງ ເພື່ອ ຍົກໃຫ້ເຫັນພື້ນຖານທິດສະດີ, ແນວທາງຂອງພັກ ແລະ ນະໂຍບາຍ ຂອງລັດ ເພື່ອນຳໄປແກ້ໄຂບັນຫາຕ່າງໆ ໃນການພັດທະນາເສດຖະກິດ ຕະຫຼາດ ຕາມທິດສັງຄົມນິຍົມ ຢູ່ ສປປ ລາວ, ເພື່ອຍູ້ແຮງການ ພັດທະນາການເຄື່ອນໄຫວເສດຖະກິດ ຂອງບັນດາຫົວໜ່ວຍທຸລະກິດ ໃຫ້ເຄື່ອນໄຫວຖືກຕ້ອງ ແລະ ຂະຫຍາຍຕົວຕາມພື້ນຖານເສດຖະກິດ ຕະຫຼາດ, ຊອກໃຫ້ເຫັນຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຢ່າງມີວິທະຍາ ສາດ, ພ້ອມທັງຊອກທິດທາງ ແລະ ວິທີການທີ່ເໝາະສົມ ເພື່ອເປັນ ພື້ນຖານໃນການພັດທະນາເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ ຢູ່ ສປປ ລາວ.

ທິດສະດີທີ່ເປັນພື້ນຖານໃນການຄົ້ນຄວ້າ: ພື້ນຖານທິດສະດີ ທີ່ນຳໃຊ້ເຂົ້າໃນການຄົ້ນຄວ້າ ແມ່ນອີງໃສ່ທິດສະດີຂອງມາກ-ເລນິນ ກ່ຽວກັບຄວາມສອດຄ່ອງ ລະຫວ່າງກຳລັງການຜະລິດ ແລະ ການພົວ ພັນການຜະລິດ, ແນວທາງຂອງພັກ, ນະໂຍບາຍຂອງລັດ ແລະ ແຜນ ພັດທະນາເສດຖະກິດ-ສັງຄົມຂອງລັດ ໃນແຕ່ລະໄລຍະ ກ່ຽວກັບການ ພັດທະນາເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ ຢູ່ປະເທດເຮົາ.

ວິທີໃນການຄົ້ນຄວ້າ: ການຄົ້ນຄວ້າໃນຄັ້ງນີ້ ແມ່ນໄດ້ໃຊ້ວິທີ ການສັງລວມຂໍ້ມູນທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງ, ເປັນຕົ້ນ ແມ່ນບົດລາຍງານເສດຖະກິດ-ສັງຄົມແຫ່ງຊາດ, ບົດລາຍງານອື່ນໆ ທີ່ ກ່ຽວຂ້ອງ ໂດຍການນຳເອົາຂໍ້ມູນຕົວເລກທາງດ້ານເສດຖະກິດ ໃນໄລ ຍະຜ່ານມາ ເພື່ອໄຈ້ແຍກໃຫ້ເຫັນເນື້ອໃນຕົ້ນຕໍ ກ່ຽວກັບການພັດທະ ນາພື້ນຖານເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ, ຕີລາຄາບັນຫາ ແລະ ສົມທຽບທິດສະດີ ກັບພຶດຕິກຳ.

I. ທັດສະນະ ຂອງພັກປະຊາຊົນປະຕິວັດລາວ ກ່ຽວກັບ ເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ.

ກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກປະຊາຊົນປະຕິວັດລາວ ປີ 1986 ໄດ້ເປັນຂີດໝາຍສຳຄັນ ຂອງພາລະກິດປ່ຽນແປງໃໝ່ຢູ່ປະເທດ ເຮົາ. ກອງປະຊຸມ ໄດ້ວາງແຜນນະໂຍບາຍພາລະກິດປ່ຽນແປງໃໝ່ ໂດຍເລີ່ມຈາກການປ່ຽນແປງໃໝ່ທາງດ້ານຈິນຕະນາການ, ເຊິ່ງກ່ອນ ອື່ນໝົດແມ່ນຈິນຕະນາການທາງດ້ານເສດຖະກິດ, ປັບປຸງແຜນນຳພາ ແລະ ວິທີເຮັດວຽກຂອງຄະນະພັກຂັ້ນຕ່າງໆ, ປັບປຸງລະບົບຄຸ້ມຄອງໃ ໝ່ຕໍ່ທຸກຂົງເຂດຊີວິດສັງຄົມ ແລະບັນຫາອື່ນໆ. ພ້ອມນັ້ນ, ກອງ ປະຊຸມໃຫຍ່ ຄັ້ງທີ IV ຂອງພັກຍັງໄດ້ກຳນົດວ່າ: ນຳໃຊ້ການພົວພັນ ສິນຄ້າ-ເງິນຕາ ເຂົ້າໃນການຫັນເສດຖະກິດແຫ່ງຊາດ ເປັນແຜນການ ໃຫ້ຄົບຖ້ວນ ແລະຖືກຕ້ອງ, ພວກເຮົາຕ້ອງຮັບຮູ້ເສດຖະກິດຜະລິດ

ສິນຄ້າ, ນັບທັງການຜະລິດສິນຄ້າງ່າຍດາຍ ຍາມໃດກໍກ້າວໜ້າ ກວ່າ ເສດຖະກິດທຳມະຊາດກຸ້ມຕົນເອງພໍໃຜພໍລາວ (ວາລະສານອາລຸນໃໝ່, 1986, ໜ້າ 125). ໃນນັ້ນ, ລັດຕ້ອງສົ່ງເສີມການຂະຫຍາຍການພົວພັນສິນຄ້າ-ເງິນຕາ, ສ້າງທຸກເງື່ອນໄຂໃຫ້ປະຊາຊົນທຳການຜະລິດສິນຄ້າອອກໃຫ້ສັງຄົມນັບມື້ນັບຫຼາຍ ແລະ ສະໜ່ຳສະເໝີ, ການແລກປ່ຽນສິນຄ້າສະດວກສະບາຍ ແນໃສ່ຫັນປ່ຽນເສດຖະກິດທຳມະຊາດ ໄປສູ່ເສດຖະ ກິດສິນຄ້າ ຕາມທິດສັງຄົມນິຍົມ.

ໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ V ຂອງພັກ (1991) ,ບັນດາແຜນນະໂຍບາຍປ່ຽນແປງໃໝ່ ໄດ້ຮັບການກຳນົດເປັນແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການ. ໃນນັ້ນ ໄດ້ກຳນົດເນື້ອໃນທາງດ້ານເສດຖະກິດ ຂອງລະບອບປະຊາທິປະໄຕ ປະຊາຊົນ ຢູ່ປະເທດເຮົາ ແມ່ນນຳໃຊ້ເສດຖະກິດຕະຫຼາດທີ່ນັບມື້ນັບຂະຫຍາຍຕົວຢ່າງຄົບຖ້ວນສົມບູນ ຕາມບັນດາກົດເກນພາວະວິໄສແຫ່ງການຫັນການຜະລິດທີ່ມີລັກສະນະທຳມະຊາດ ແລະ ເຄື່ອງ ທຳມະຊາດ ໄປສູ່ການຜະລິດສິນຄ້າແບບອຸດສາຫະກຳ ໂດຍຜ່ານ ບາດກ້າວລະຫວ່າງກາງ ຂອງການຂະຫຍາຍການຜະລິດສິນຄ້ານ້ອຍ. ນັ້ນແມ່ນເສດຖະກິດທີ່ປະ ກອບດ້ວຍຫຼາຍພາກສ່ວນ, ຫຼາຍຮູບ ກຳມະສິດ, ຫຼາຍຮູບການຈັດຕັ້ງເສດຖະກິດ ທີ່ມີຫຼາຍຂະໜາດ ແລະ ລະດັບແຕກຕ່າງກັນ.

ສືບຕໍ່ແນວທາງປ່ຽນແປງໃໝ່, ກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກ (1996) ໄດ້ວາງທິດທາງໜ້າທີ່ລວມ ກ່ຽວກັບການພັດທະ ນາໃນຂົງເຂດເສດຖະກິດ ເຊິ່ງສະແດງອອກ ຄື: ສືບຕໍ່ພັດທະນາເສດ ຖະ ກິດສິນຄ້າຫຼາຍພາກສ່ວນ ເຄື່ອນໄຫວຕາມກົນໄກຕະຫຼາດ ທີ່ ມີການຄຸ້ມຄອງຂອງລັດພັກເຮົາ ຢືນຢັນວ່າ: “ໂຄງປະກອບ ເສດຖະກິດຢູ່ປະ ເທດເຮົາ “ແມ່ນໂຄງປະກອບເສດຖະກິດຫຼາຍ ພາກສ່ວນ, ຫຼາຍຮູບກຳມະສິດ ແລະ ຫຼາຍຮູບການຈັດຕັ້ງ ເສດຖະກິດ ທີ່ຄົງຕົວຢູ່ນຳກັນຢ່າງຍາວນານ. ແຕ່ລະພາກສ່ວນ ເສດຖະກິດ ລ້ວນແຕ່ມີສິດສະເໝີພາບຕໍ່ໜ້າກົດໝາຍ ແລະ ເຄື່ອນ ໄຫວພາຍໃຕ້ການຄຸ້ມຄອງຂອງລັດ ຕາມກົນໄກເສດຖະກິດ ຕະຫຼາດ ທີ່ທັງຮ່ວມສຳພັນກັນ, ທັງແຂ່ງຂັນກັນ, ແຕ່ຫາກມີພັນທະ ຮ່ວມກັນຄື: ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດໃຫ້ ຈະເລີນຮັ່ງມີ” (ວາລະສານອາລຸນໃໝ່, 1996, ໜ້າ 31) ພັກເຮົາ ຮັບຮູ້ວ່າ ບັນດາພາກສ່ວນເສດຖະ ກິດທີ່ກ່າວມານັ້ນ ສະແດງເຖິງ ລະດັບຂອງກຳລັງການຜະລິດແຕ່ຕ່ຳຫາສູງ. ໃນນັ້ນ, ພາກສ່ວນ ເສດຖະກິດທີ່ກວມສ່ວນຫຼວງຫຼາຍ ແລະ ຕ່ຳກວ່າໝູ່ແມ່ນ ເສດຖະກິດທຳມະຊາດ ແລະ ເຄື່ອງທຳມະຊາດ. ຍ້ອນແນວນັ້ນ, ຢາກຂະຫຍາຍກຳລັງການຜະລິດ ສ້າງເປັນໂຄງປະກອບເສດຖະກິດ ກະສິກຳ-ປ່າໄມ້-ອຸດສາຫະກຳ ແລະ ການບໍລິການຢ່າງສົມສ່ວນນັ້ນ, ພັກເຮົາວາງນະໂຍບາຍນຳໃຊ້ຫຼາຍພາກສ່ວນເສດຖະກິດ ຕ້ອງເລີ່ມ ຈາກຄອບຄົວຊາວກະສິກອນ.

ທັດສະນະຂອງພັກ ໃນການພັດທະນາເສດຖະກິດທີ່ວາງອອກ ໃນກອງປະຊຸມໃຫຍ່ ຄັ້ງທີ VII (2001), ອັນເປັນພື້ນຖານກໍ່ຍັງແມ່ນ ການຂະຫຍາຍກຳລັງການຜະລິດ ໄປພ້ອມກັບການປັບປຸງການພົວພັນ ການຜະລິດໃຫ້ສອດຄ່ອງກັນ ເພື່ອຊຸກຍູ້ການຜະລິດສິນຄ້າ, ຂຸດຄົ້ນ ເສີມຂະຫຍາຍຂະແໜງການ ທີ່ປະເທດເຮົາມີທ່າແຮງ ຕິດພັນກັບການ ຊຸກຍູ້ສົ່ງເສີມການຜະລິດຂອງປະຊາຊົນຢ່າງແຂງແຂງ. ພັກເຮົາໄດ້ ຢືນຢັນວ່າ: “ລະບອບຂອງພວກເຮົາແມ່ນລະບອບທີ່ປະຊາຊົນເປັນເຈົ້າ , ເຮັດທຸກສິ່ງທຸກຢ່າງເພື່ອຜົນປະໂຫຍດ ແລະ ຄວາມຢູ່ເຢັນເປັນສຸກ ຂອງປະຊາຊົນ… ຖ້າພວກເຮົາດຳເນີນການປ່ຽນແປງໃໝ່, ເຮັດໃຫ້ ເສດຖະກິດມີການເຕີບໂຕ ໂດຍທີ່ພົນລະເມືອງຈຳນວນຫຼວງ ຫຼາຍ ຂອງສັງຄົມ ຍັງຖືກຕົກທຸກໄດ້ຍາກ, ຊີວິດການເປັນຢູ່ບໍ່ໄດ້ຮັບການ ປັບປຸງ, ອັນນີ້ແມ່ນຝືນກັບອຸດົມການຂອງພັກ ແລະ ເປັນສິ່ງທີ່ ປະຊາຊົນລາວບໍ່ສາມາດຮັບເອົາໄດ້”. ທິດສັງຄົມນິຍົມ ຍັງສະແດງ ອອກໃນການປະຕິບັດຄວາມຍຸຕິທຳສັງຄົມ ເຊິ່ງພັກໄດ້ຢືນຢັນວ່າ: “ໃນເງື່ອນໄຂປັດຈຸບັນ ແມ່ນປະຕິບັດຕາມຫຼັກການໃຜເຮັດວຽກດີ, ມີ ປະສິດທິຜົນສູງ, ມີການປະກອບສ່ວນໃຫ້ແກ່ສັງຄົມຫຼາຍກວ່າຕ້ອງໄດ້ ຮັບນະໂຍບາຍຕອບແທນຫຼາຍກວ່າ” (ວາລະສານອາລຸນໃໝ່, 2001, ໜ້າ 33-36).

ສືບທອດຈິນຕະນາການ ຂອງກອງປະຊຸມໃຫຍ່ ຄັ້ງທີ VII, ກອງປະຊຸມໃຫຍ່ ຄັ້ງທີ VIII ໄດ້ສຸມໃສ່ການເພີ່ມປະສິດທິພາບແຫ່ງ ການຄຸ້ມຄອງມະຫາພາກຂອງລັດ ຕໍ່ເສດຖະກິດຕະຫຼາດ. ພັກເຮົາໄດ້ ຢືນຢັນວ່າ: “ການພັດທະນາເສດຖະກິດຢູ່ປະເທດເຮົາ ແມ່ນບົນພື້ນ ຖານກົນໄກຕະຫຼາດ ຕາມທິດສັງຄົມນິຍົມ” (ວາລະສານອາລຸນໃໝ່, 2006, ໜ້າ 53). ພັກໄດ້ວາງແຜນນະໂຍບາຍເລັ່ງຫວ່ງໃຫ້ເພີ່ມປະສິດ ທິພາບແຫ່ງການຄຸ້ມຄອງຂອງລັດ ເພື່ອເຮັດໃຫ້ການພັດທະນາເສດຖະ ກິດ ດຳເນີນໄປຖືກຕາມຈຸດໝາຍ ແລະ ທ່າແຮງຂອງປະເທດ ໂດຍເອົາ ໃຈໃສ່ປັບປຸງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບເສດຖະກິດ ໃຫ້ມີຄວາມສອດຄ່ອງກັບກົດເກນພາວະວິໄສ ແລະ ກົນໄກຕະຫຼາດ, ປັບປຸງລະບຽບບໍລິຫານ ແລະ ການຄຸ້ມຄອງຂອງລັດໃຫ້ໂປ່ງໃສ, ກຳ ຈັດແກ້ໄຂສິ່ງເສດເຫຼືອ ແລະ ຮ່ອງຮອຍຂອງກົນໄກເກົ່າ (ກົນໄກຄຸ້ມ ຄອມລອມສູນອາດຍາສິດ); ສ້າງສະພາບແວດລ້ອມດ້ານກົດໝາຍ, ນະໂຍບາຍ ແລະ ການບໍລິການ ທີ່ອຳນວຍຄວາມສະດວກ ແລະ ເປັນ

ແຮງຈູງໃຈໃຫ້ແກ່ຜູ້ປະກອບການຜະລິດ, ທຸລະກິດທັງພາຍໃນ ແລະຕ່າງປະເທດ, ທັງຂະໜາດນ້ອຍ-ຂະໜາດກາງ ແລະ ຂະໜາດໃຫຍ່.

ເພື່ອເພີ່ມຄວາມສາມາດ ແລະ ປະສິດທິພາບຂອງການຄຸ້ມຄອງລັດຕໍ່ເສດຖະກິດດ້ວຍກົດໝາຍ, ເອົາໃຈໃສ່ປັບປຸງລະບອບລະບຽບແລະ ກົນໄກຄຸ້ມຄອງເສດຖະກິດ, ຄົ້ນຄວ້າປັບປຸງນະໂຍບາຍ ແລະ ກົດໝາຍສຳລັບການຄຸ້ມຄອງຂະແໜງການ ໃຫ້ຄົບຖ້ວນສົມບູນ; ຊ່ວຍຊຸຍູ້ໜູນທ້ອງຖິ່ນ ແລະ ຫົວໜ່ວຍຈຸລະພາກ ໃນການຈັດຕັ້ງປະຕິບັດກົດໝາຍ, ນະໂຍບາຍ ແລະ ວຽກງານຕ່າງໆຂອງຂະແໜງການ; ນຳພາລັດເຮັດພາລະບົດບາດຄຸ້ມຄອງດັດສົມ ເພື່ອຮັບປະກັນໃຫ້ການຂະ ຫຍາຍຕົວຂອງເສດຖະກິດໄປຖືກທິດ ແລະ ບໍ່ໃຫ້ເກີດມີການຫຼຸດໂຕນກັນຫຼາຍເກີນໄປ ລະຫວ່າງ ບໍລິເວນເຂດແຄ້ວນຕ່າງໆ ແລະ ລະຫວ່າງຂົ້ວທຸກ-ຂົ້ວຮັ່ງ ໃນສັງຄົມ ນັ້ນ, ກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ໄດ້ເນັ້ນໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ "ບຸກທະລຸດ້ານຈິນຕະນາການ, ກ່ອນອື່ນໝົດ ແມ່ນຕ້ອງລົບລ້າງຜົນສະທ້ອນຂອງກົນໄກລອມສູນອຳນາດ ສິດ ບໍລິຫານເກື້ອກຸນຢ່າງສິ້ນເຊີງ, ຫັນໄປສູ່ກົນໄກເສດຖະກິດຕະຫຼາດທີ່ມີການຄຸ້ມຄອງ, ຍຶດໝັ້ນເອົາການພັດທະນາເສດຖະກິດເປັນໃຈກາງ, ສ້າງຄວາມກົມກຽວ ລະຫວ່າງ ການພັດທະນາເສດຖະກິດ ກັບການພັດທະນາວັດທະນາທຳ-ສັງຄົມ" (ວາລະສານອາລຸນໃໝ່, 2011, ໜ້າ 69). ແລະກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ ໄດ້ຢືນຢັນວ່າ: "ສ້າງ ແລະ ພັດທະນາເສດຖະ ກິດຕະຫຼາດຕາມທິດສັງຄົມນິຍົມ ທີ່ມີຫຼາຍຮູບການແຈກຢາຍ ແລະຫຼາຍຮູບການຈັດຕັ້ງການຜະລິດທີ່ສະເໝີພາບ, ຮ່ວມກັນ ແລະແຂ່ງຂັນກັນຢ່າງໂປ່ງໃສຕາມກົດໝາຍ. ໃນນັ້ນ, ເສດຖະກິດຂອງລັດ ແລະເສດຖະກິດຮ່ວມມືຂອງປະຊາຊົນ ນັບມື້ມີບົດບາດສຳຄັນຮ່ວມກັບພາກສ່ວນເສດຖະກິດໜຶ່ງ ເພື່ອພັດທະນະປະເທດຊາດ ໃຫ້ຈະເລີນວັດທະນາ" (ວາລະສານອາລຸນໃໝ່, 2016, ໜ້າ 20).

ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ, ຍັງໄດ້ເນັ້ນໜັກຕື່ມວ່າ: ສ້າງການເຕີບໂຕຂອງເສດຖະກິດທີ່ມີຄຸນນະພາບ ດ້ວຍການປະຕິຮູບໂຄງສ້າງເສດຖະກິດໃໝ່ໃນແຕ່ລະຂະແໜງການ ແລະ ທ້ອງຖິ່ນ" (ວາລະສານອາລຸນໃໝ່, 2021, ໜ້າ 53). ນອກນັ້ນ, ຍັງມີແຜນພັດທະນາເສດຖະກິດແຫ່ງຊາດ ໃນແຕ່ລະໄລຍະ, ເປັນຕົ້ນແມ່ນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ໄດ້ກ່າວວ່າ: "ພັດທະນາເສດຖະກິດແຫ່ງຊາດໃຫ້ມີຄຸນນະພາບ ດ້ວຍການຫັນໂຄງປະກອບເສດຖະກິດ ໄປຕາມທິດຫັນເປັນອຸດສາ ຫະກຳ ແລະ ທັນສະໄໝ, ປັບປຸງໂຄງປະກອບເສດຖະກິດໃຫ້ມີຄວາມຫຼາກຫຼາຍ ຕາມຂະແໜງການຜະລິດ-ບໍລິການ, ມີປະສິດທິພາບ ແລະສ້າງມູນຄ່າເພີ່ມ ຕາມທ່າແຮງຍິ່ມຊ້ອນ ຂອງປະເທດ" (ວາລະສານອາລຸນໃໝ່, 2021, ໜ້າ 56).

ສະນັ້ນ, ທັດສະນະຂອງພັກ ຕໍ່ການພັດທະນາພື້ນຖານເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ ມັນຮຽກຮ້ອງເພີ່ມມີທະວີການຮ່ວມມືທາງດ້ານວິທະຍາສາດ-ເຕັກນິກ, ເຕັກໂນໂລຊີ ກັບບັນດາປະເທດຕ່າງໆ ນັບທັງການສ້າງພະນັກງານ ແລະ ກຳມະກອນ ໃຫ້ມີຄວາມຊຳນານງານ. ການດຶງດູດເອົານັກຊ່ຽວຊານ, ມັນສະໝອງຂອງຕ່າງປະເທດ ເຂົ້າສູ່ການພັດທະນາເສດຖະກິດ ຂອງປະເທດເຮົາ ແມ່ນຈຳເປັນທີ່ສຸດ. ນະໂຍບາຍເປີດກວ້າງການພົວພັນກັບຕ່າງປະເທດ ເລັ່ງທອງໃຫ້ດຶງດູດເອົາຜູ້ຊ່ຽວຊານຕ່າງປະເທດ ເພື່ອຊ່ວຍພວກເຮົາໃນດ້ານເຕັກໂນໂລຊີ, ວິຊາການຕ່າງໆ ແນໃສ່ເຮັດໃຫ້ເສດຖະກິດແຫ່ງຊາດ ມີການຫັນປ່ຽນໃໝ່. ເສດຖະກິດຕະຫຼາດ ເລັ່ງທອງຕ້ອງເປີດກວ້າງການພົວພັນ, ເປີດຕະຫຼາດອອກສູ່ຕ່າງປະເທດ ເພື່ອດຶງດູດເອົາທຶນຮອນ, ເຕັກນິກ ແລະ ຜູ້ຊ່ຽວຊານ ເພື່ອຂະຫຍາຍກຳລັງການຜະລິດ, ແກ້ໄຂບັນຫາຕ່າງໆ ທາງດ້ານເສດຖະກິດ-ສັງຄົມ ຂອງປະເທດເຮົາ.

II. ຈຸດພິເສດການພັດທະນາພື້ນຖານເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ ຢູ່ ສປປ ລາວ.

1). ເລີ່ມຈາກການແກ້ໄຂບັນຫາການພັດທະນາຢ່າງສົມສ່ວນ ດ້ານມູນເຊື້ອ, ສັດຈະທຳ ແລະ ພຶດຕິກຳຂອງປະເທດຕົນເອງ. ແນວທາງໃນການສ້າງພື້ນຖານເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ, ແມ່ນການແກ້ໄຂບັນຫາທາງດ້ານເສດຖະກິດກັບປະຊາທິປະໄຕ, ຄວາມ ສະເໝີພາບ ແລະ ກ້າວໜ້າໃນສັງຄົມ ແນ່ນອນຕ້ອງຕ່າງກັບປະເທດອື່ນ, ໂດຍເລີ່ມຈາກຈຸດພິເສດທາງດ້ານເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ມູນເຊື້ອຂອງປະຊາຊົນລາວບັນດາເຜົ່າ ທີ່ຍາມໃດກໍ່ຍົກສູງຄຸນຄ່າດ້ານຄວາມສາມັກຄີເປັນປົກແຜ່ນແໜ້ນໜາ, ຢູ່ອ້ອມພັກ, ແນວຄິດຂອງພັກ ແລະ ຈິດໃຈຂອງປະຊາຊົນລາວບັນດາເຜົ່າ ກໍ່ລ້ອມແຕ່ຫັນທິດໄປສູ່ການສ້າງປະເທດລາວ ໃຫ້ກາຍເປັນປະເທດສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບແລະ ວັດທະນາຖາວອນ. ສິ່ງດັ່ງ ກ່າວ ໄດ້ສົ່ງຜົນກະທົບເຖິງການຕັດສິນແກ້ໄຂສາຍພົວພັນ ລະຫວ່າງການເຕີບໂຕ ແລະ ຄວາມສະເໝີພາບໃນສັງຄົມ, ພວກເຮົາບໍ່ສາມາດຍອມຈຳນົນຕໍ່ຄວາມທຸກຍາກ, ຄວາມຫຼ້າຫຼັງ ແລະ ຄວາມສະເໝີພາບແບບເກົ່າ, ແຕ່ກໍ່ບໍ່ອາດຈະຮຽນແບບ

ຕາຍໂຕ ຕໍ່ກັບຕົວແບບການຂະ ຫຍາຍຕົວຂອງປະເທດອື່ນໆ.

2). ຈຸດໝາຍຍຸດທະສາດ ຂອງການພັດທະນາເສດຖະກິດຕະ ຫຼາດ ຢູ່ປະເທດເຮົາ. ພັກເຮົາໄດ້ກຳນົດຈຸດໝາຍ ຂອງການພັດທະນາ ພື້ນຖານເສດຖະກິດຕະຫຼາດ ແມ່ນແນໃສ່ປົດປ່ອຍກຳລັງການ ຜະລິດ, ລະດົມທຸກກຳລັງແຮງທັງພາຍໃນ ແລະ ຕ່າງປະເທດ ເພື່ອ ປະຕິບັດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ກໍ່ສ້າງ ພື້ນຖານວັດຖຸ-ເຕັກນິກ ໃຫ້ແກ່ການກ້າວຂຶ້ນສັງຄົມນິຍົມເທື່ອລະ ກ້າວ, ໂດຍການຍົກສູງປະສິດທິຜົນທາງດ້ານເສດຖະກິດ-ສັງຄົມ, ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າ ໃຫ້ດີຂຶ້ນເທື່ອ ລະກ້າວ.

3). ສ້າງ ແລະ ພັດທະນາບັນດາພາກສ່ວນເສດຖະກິດ ທີ່ ອີງໃສ່ບົນພື້ນຖານບັນດາຮູບແບບກຳມະສິດໃຫ້ມີຄວາມເຂັ້ມແຂງ ແລະສອດຄ່ອງ.ພັກ ແລະລັດຂອງພວກເຮົາ ໄດ້ມີແນວທາງ ຂະຫຍາຍເສດຖະກິດຫຼາຍພາກສ່ວນ ດ້ວຍຫຼາຍຮູບການກຳມະສິດ, ໃນນັ້ນມີສາມຮູບການກຳສິດພື້ນຖານຄື: ກຳມະສິດລັດ, ກຳມະ ສິດລວມໝູ່ ແລະ ກຳມະສິດເອກະຊົນ, ໃນສາມຮູບການກຳມະສິດ ນັ້ນ ປະກອບດ້ວຍຫຼາຍພາກສ່ວນເສດຖະກິດ, ຫຼາຍຮູບການຈັດຕັ້ງ ການຜະລິດ-ທຸລະກິດ ໂດຍການຖືບົດບາດເປັນພື້ນຖານ ຂອງ ກຳມະສິດຂອງລັດ ແລະ ກຳມະສິດລວມໝູ່. ໃນນັ້ນ, ເສດຖະກິດ ລັດ ຕ້ອງບົ່ນຕົວກ້າວຂຶ້ນດຳລົງບົດບາດເປັນເຈົ້າພາທາງ, ພ້ອມກັບ ເສດຖະກິດລວມໝູ່ ເພື່ອນັບມື້ນັບກາຍເປັນພື້ນຖານອັນໝັ້ນແກ່ນ ໃນພື້ນຖານເສດຖະ ກິດແຫ່ງຊາດ.

4). ສ້າງ ແລະພັດທະນາເສດຖະກິດຕະຫຼາດຕາມທິດ ສັງຄົມນິຍົມ ຕ້ອງຮັບປະກັນບົດບາດການຄຸ້ມຄອງຂອງລັດ ໃຫ້ມີ ຄວາມເຂັ້ມແຂງ. ລັດຂອງພວກເຮົາ ແມ່ນລັດຂອງປະຊາຊົນ, ໂດຍ ປະຊາ ຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ຢູ່ພາຍໃຕ້ການ ນຳພາຂອງພັກປະຊາຊົນປະຕິວັດລາວ ເພື່ອຮັກສາບົດບາດນຳພາ ຂອງຕົນ, ພັກຕ້ອງອອກແຮງປັບປຸງ, ກໍ່ສ້າງການຈັດຕັ້ງຂອງຕົນໃຫ້ ສົມເປັນກອງລະວັງໜ້າ ຂອງຊົນຊັ້ນກຳມະກອນ, ປັບປຸງດັດແປງ ກົງຈັກຂອງລັດໃຫ້ກະທັດຮັດ, ປອດໃສ ແລະ ເຂັ້ມແຂງ ເພື່ອ ດັດສົມເສດ ຖະກິດຕະຫຼາດໄປຕາມທິດສັງຄົມນິຍົມ.

5). ປະຕິບັດການແຈກຢາຍຕາມໝາກຜົນ ຂອງການອອກ ແຮງງານ ແລະ ປະສິດທິຜົນທາງເສດຖະກິດເປັນຕົ້ນຕໍ. ໃນພື້ນຖານ ເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ປະຕິບັດການແຈກຢາຍ ຕົ້ນຕໍແມ່ນຕາມໝາກຜົນຂອງການອອກແຮງງານ ແລະ ປະສິດທິຜົນ ທາງດ້ານເສດຖະກິດ. ພ້ອມກັນນັ້ນ, ກໍ່ແບ່ງປັນຕາມລະດັບການ ປະກອບທຶນ ແລະ ປະຕິບັດສັນຍາເຂົ້າໃນການຜະລິດ-ທຸລະກິດ ແລະ ໂດຍຜ່ານຜົນປະໂຫຍດທາງສັງຄົມ; ການຂະຫຍາຍຕົວທາງດ້ານ ເສດຖະກິດ ຕ້ອງຕິດພັນກັບຄວາມກ້າວໜ້າ ແລະ ຄວາມຍຸຕິທຳໃນ ສັງຄົມຢູ່ໃນແຕ່ລະບາດກ້າວແຫ່ງການຂະຫຍາຍຕົວນັ້ນ.

6). ການສ້າງ ແລະ ພັດທະນາເສດຖະກິດຕະຫຼາດຕາມທິດ ສັງຄົມນິຍົມ ປະຕິບັດໄປຕາມທິດເປີດປະຕູເຊື່ອມໂຍງກັບພາກພື້ນ ແລະ ໃນໂລກ, ຕະຫຼາດພາຍໃນຕິດພັນກັບພາຍນອກ, ປະຕິບັດຕາມ ຄຳໝັ້ນສັນຍາ ແລະ ບັນດາຂໍ້ກຳນົດໃນການພົວພັນເສດຖະກິດກັບ ສາກົນ, ແຕ່ຕ້ອງຮັບປະກັນຄວາມເປັນເອກະລາດ, ເປັນເຈົ້າຕົນເອງ ແລະ ປົກປັກຮັກສາຜົນປະໂຫຍດຂອງຊາດ ກໍ່ຄືປະຊາຊົນໄວ້ໃຫ້ ໝັ້ນຄົງໃນເງື່ອນປັດຈຸບັນ.

III. ພຶດຕິກຳ ໃນການພັດທະນາພື້ນຖານເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ ຢູ່ປະເທດເຮົາ.

1). ຜົນສຳເລັດໃນການຈັດຕັ້ງປະຕິບັດ ແນວທາງນະໂຍບາຍ ເສດຖະກິດຕາມກົນໄກຕະຫຼາດ ໃນໄລຍະເກືອບ 40 ກວ່າປີ, ພວກ ເຮົາຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງ ຄື: ໄດ້ປະຕິບັດນະໂຍບາຍ ຫັນປ່ຽນເສດຖະກິດທຳມະຊາດ ໄປສູ່ເສດຖະກິດສິນຄ້າຫຼາຍ ພາກສ່ວນ, ໄດ້ມີໝາກຜົນຕົວຈິງ, ກຳລັງແຮງບໍ່ມຊ້ອນຂອງບັນດາ ພາກສ່ວນເສດຖະ ກິດ ນັບມື້ນັບໄດ້ຮັບການເສີມຂະຫຍາຍດີຂຶ້ນ, ລະບອບເສດຖະກິດສິນຄ້າຫຼາຍພາກສ່ວນຕາມທິດສັງຄົມນິຍົມ ຄ່ອຍໆພັດທະນາເປັນຕົວເປັນຕົນ, ເສດຖະກິດມະຫາພາກພື້ນຖານມີ ສະຖຽນລະພາບ ເຊິ່ງເຫັນໄດ້ຈາກການພັດທະນາຕະຫຼາດ ແລະ ການ ກໍ່ສ້າງພື້ນຖານໂຄງລ່າງ ໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງ. "ໃນ ປີ 2022 ທົ່ວປະເທດມີຕະຫຼາດທັງໝົດ ຈຳນວນ 865 ແຫ່ງ; ໃນນັ້ນ ມີຕະຫຼາດໃຫຍ່ ຈຳນວນ 48 ແຫ່ງ, ຕະຫຼາດກາງ ຈຳນວນ 146 ແຫ່ງ, ຕະຫຼາດນ້ອຍ ຈຳນວນ 401 ແຫ່ງ ແລະ ຕະຫຼາດນັດ ຈຳນວນ 270 ແຫ່ງ" (ສູນສະຖິຕິແຫ່ງຊາດ, 2023, ໜ້າ 3). ນອກນັ້ນ, ຍັງມີສູນ ການຄ້າ, ຫ້າງຊັບພະສິນຄ້າ ແລະ ຕະຫຼາດກາງຄືນ ໄດ້ມີການ ພັດທະນາຢ່າງເປັນລະບົບ ເປັນຕົ້ນແມ່ນຢູ່ນະຄອນຫຼວງວຽງຈັນ, ຫຼວງພະບາງ, ສະຫວັນນະເຂດ, ຈຳປາສັກ... ພ້ອມກັນນັ້ນ, ກໍ່ໄດ້ມີ ການສົ່ງເສີມໃຫ້ມີການລົງທຶນໃສ່ການກໍ່ສ້າງຕະຫຼາດ ແລະ ສູນການຄ້າ ພາຍໃນ; ການພັດທະນາຂົງເຂດສັງ ຄົມ, ການປະຕິບັດຄວາມກ້າວໜ້າ ແລະ ຍຸຕິທຳສັງຄົມ, ຊີວິດການເປັນຢູ່ ຂອງປະຊາຊົນສ່ວນໃຫຍ່ ໄດ້ ຮັບການປັບປຸງຢ່າງຈະແຈ້ງ.

2). ສ້າງ ແລະ ປັບປຸງເສດຖະກິດຂອງລັດ ແລະ ລັດວິສາຫະ ກິດບາງຂະແໜງການ, ບາງຂົງເຂດ ມີປະສິດທິຜົນສູງຂຶ້ນເທື່ອລະກ້າວ,

ສາມາດເປັນກຳລັງແຮງພື້ນຖານ ຫຼື ເປັນເຈົ້າພາທາງໃນລະບົບເສດ ຖະ ກິດແຫ່ງຊາດ ແລະ ໄດ້ກາຍເປັນຫົວໜ່ວຍທີ່ມີເງື່ອນໄຂຈັດສັນ ແບ່ງ ປັນລາຍໄດ້ ແລະ ມີພັນທະໃຫ້ເປົ້າໝາຍຕ່າງໆໃນສັງຄົມ; ພ້ອມທັງຮັບຮູ້ ແລະ ຮັບຮອງເອົາການຄົ້ງຕົວຢ່າງຍາວນານ ຂອງ ບັນດາພາກສ່ວນເສດຖະກິດ ແລະ ບັນດາພາກສ່ວນເສດຖະກິດ ໄດ້ ກາຍເປັນກຳລັງແຮງໃນການສ້າງສາພັດທະນາປະເທດຊາດ.

3). ລັດສາມາດປະຕິບັດພາລະບົດບາດຄຸ້ມຄອງ ແລະ ເສີມ ຂະຫຍາຍດ້ານຕັ້ງໜ້າຂອງຕະຫຼາດ, ເຮັດໃຫ້ການເຄື່ອນໄຫວຂອງ ຕະຫຼາດ ຄ່ອຍໆເປັນຕົວກຳນົດການນຳໃຊ້ທຶນຮອນ, ແຫຼ່ງວັດຖຸ ດິບໃຫ້ເກີດມີປະໂຫຍດສູງຂຶ້ນ ແລະ ກະຕຸ້ນຊຸກຍູ້ຜູ້ປະກອບການ ໃຫ້ມີຄວາມທ້າວທັນ ແລະ ປະດິດສ້າງໃນການນຳໃຊ້ ວິທະຍາສາດ-ວິທະຍາການໃໝ່ ເຂົ້າໃນການຜະລິດ-ທຸລະກິດ ແລະການບໍລິການ.

4). ລັດໄດ້ມີການປະຕິບັດລະບອບການແຈກຢາຍທີ່ເໝາະ ສົມ ແລະ ເປັນທຳ, ການແຈກຢາຍຖືປະສິດທິຜົນເປັນຫຼັກ ແລະ ຕ້ອງຄຳນຶງເຖິງຄວາມຍຸຕິທຳ, ສົ່ງເສີມການອຸທິດເຫື່ອແຮງ ແລະ ສະຕິປັນຍາ, ຄວາມຮູ້ຄວາມສາມາດຂອງຄົນ, ທັງຕ້ານກັບລັດທິ ສະເລ່ຍ, ທັງສະກັດກັ້ນການມີລາຍໄດ້ແຕກໂຕນກັນຫຼາຍເກີນໄປ.

5).ໄດ້ສ້າງພື້ນຖານລະບົບປະກັນສັງຄົມ ໃນເສດຖະກິດ ຕະຫຼາດຈຳນວນໜຶ່ງ ເພື່ອກຽມພ້ອມປະເຊີນກັບຄວາມສ່ຽງ ແລະ ສິ່ງທ້າທາຍທີ່ອາດຈະກະທົບເຖິງຊີວິດການເປັນຢູ່ ຂອງກຳມະກອນ, ຊາວກະສິກອນ, ລວມທັງພະນັກງານ, ທະຫານ, ຕຳຫຼວດ...

6). ການເຕີບໂຕ ແລະ ການຫັນປ່ຽນໂຄງປະກອບ ເສດຖະກິດ.

- ການເຕີບໂຕ ຂອງເສດຖະກິດ: ຍ້ອນຈັ່ງຫວະການເຕີບໂຕ ເສດຖະກິດສູງ ແລະ ຕໍ່ເນື່ອງກັນໃນຫຼາຍປີ, ຂະໜາດພື້ນຖານ ເສດຖະກິດ ແລະ GDP ສະເລ່ຍຕໍ່ຄົນກໍ່ເພີ່ມຂຶ້ນ ເຊັ່ນ: ໃນປີ 1985 GDP ຕໍ່ຫົວຄົນ ບັນລຸໄດ້ 245 USD, ຮອດປີ 1995 ບັນລຸໄດ້ 334 USD, ປີ 2010 ບັນລຸ 1,030 USD, ປີ 2015 ເພີ່ມຂຶ້ນເປັນ 1,857 USD, ປີ 2020 ເພີ່ມເປັນ 2,664 USD ແລະ 2024 ໄດ້ ຫຼຸດລົງ 1,970 USD, ສາເຫດໄດ້ຮັບຜົນກະທົບຈາກພະຍາດໂຄວິດ 19 ແລະ ວິກິດການທາງດ້ານການເງິນ; ອັດຕາຄວາມທຸກຍາກ ກໍ່ໄດ້ ຫຼຸດລົງຢ່າງຕໍ່ເນື່ອງຈາກ 46% ຂອງພົນລະເມືອງ ໃນສົກປີ 1992-1993 ເປັນ 23.2% ໃນສົກປີ 2012-2013 ແລະ 18.3% ໃນປີ 2019.

- ໂຄງປະກອບເສດຖະກິດ: ເລີ່ມແຕ່ດຳເນີນການປ່ຽນແປງ ໃໝ່ດ້ານເສດຖະກິດ, ພັກເຮົາໄດ້ວາງແຜນນະໂຍບາຍສ້າງໂຄງປະ ກອບເສດຖະກິດທີ່ສອດຄ່ອງ, ຖືເອົາຂະແໜງກະສິກຳປ່າໄມ້ເປັນພື້ນ ຖານ, ເອົາການຂະຫຍາຍອຸດສາຫະກຳ ແລະ ບໍລິການ ເຂົ້າຕິດພັນ ແລະ ຮັບໃຊ້ການຂະຫຍາຍກະສິກຳ, ຂຸດຄົ້ນທ່າແຮງໄດ້ປ່ຽນຂອງປະ ເທດ ເພື່ອຕອບສະໜອງຄວາມຕ້ອງການໃນການເຊື່ອມໂຍງເສດຖະ ກິດສາກົນ. ປະຕິບັດຕາມແຜນນະໂຍບາຍດັ່ງກ່າວ ໄດ້ເຮັດໃຫ້ໂຄງ ປະກອບເສດຖະກິດ ມີການຫັນປ່ຽນໄປຕາມທິດທີ່ຕັ້ງໜ້າ. ຕົວຢ່າງ: ໃນປີ 2023, ລວມຍອດຜະລິດຕະພັນພາຍໃນ (GDP) ແມ່ນຢູ່ໃນ ລະດັບ 4.2%; ໃນນັ້ນ, ຂະແໜງກະສິກຳ ຂະຫຍາຍຕົວເພີ່ມຂຶ້ນ 3.7%, ຂະແໜງອຸດສາຫະກຳຂະຫຍາຍຕົວ 3.1% ແລະ ຂະແໜງ ການບໍລິການ ຂະຫຍາຍຕົວ 5.6%, ສາມາດສ້າງມູນຄ່າເພີ່ມລາຄາ ໃນ ປີ 265,475 ຕື້ກີບ ແລະ ສະເລ່ຍຕໍ່ຫົວຄົນ 1,832 ໂດລາສະຫະລັດ, ຈຳນວນປະຊາກອນ 7,545,792 ຄົນ, ອັດຕາເງິນເຟີ້ສະເລ່ຍໝົດປີ 2023 ຢູ່ໃນລະດັບ 31.2%, ເຊິ່ງໃນນີ້: ຂະແໜງກະສິກຳ ແລະ ປ່າໄມ້: ຂະ ຫຍາຍຕົວຢູ່ລະດັບ 3.7%, ຄິດເປັນມູນຄ່າເພີ່ມລາຄາໃນປີ 55,755 ຕື້ກີບ, ກວມເອົາ 21.0% ຂອງ GDP; ຂະແໜງອຸດສາຫະ ກຳ: ຂະຫາຍຕົວຢູ່ລະດັບ 3.1%, ຄິດເປັນມູນຄ່າເພີ່ມລາຄາໃນປີ 85,141 ຕື້ກີບ ກວມເອົາ 32.1% ຂອງ GDP ແລະ ຂະແໜງບໍລິການ: ຂະຫຍາຍຕົວເພີ່ມຂຶ້ນ 5.6% ຄິດເປັນມູນຄ່າເພີ່ມລາຄາໃນປີ 94,916 ຕື້ກີບ, ກວມເອົາ 35.8% ຂອງ GDP (ກະຊວງແຜນການ ແລະ ການ ລົງທຶນ, 2024, ໜ້າ 2-3).

7). ການສ້າງ ແລະພັດທະນາປັດໄຈພື້ນຖານໃຫ້ແກ່ ເສດຖະກິດຕະຫຼາດ.

- ດ້ານການເຊື່ອມໂຍງ-ເຊື່ອມຈອດພື້ນຖານໂຄງລ່າງຄົມມະນາ ຄົມ: ການເຊື່ອມໂຍງເສດຖະກິດກັບຕ່າງປະເທດ ຂອງປະເທດເຮົາ ໄດ້ ຮັບການຈັດຕັ້ງປະຕິບັດນັບມື້ ນັບເຂົ້າສູ່ລວງເລິກຮອດປະຈຸບັນລາວ ໄດ້ເປັນສະມາຊິກ ຂອງຫຼາຍອົງການ-ຈັດຕັ້ງສາກົນ, ຂອງພາກພື້ນ ແລະ ໂລກ ເຊັ່ນ: ອົງການການຄ້າໂລກ (WTO), ສະມາຄົມບັນດາປະ ເທດອາຊີຕາເວັນອອກສ່ຽງໃຕ້ (ASEAN), ກຸ່ມປະເທດລ່ອງແມ່ນ້ຳ ຂອງ (GMS), ເຂດການຄ້າເສລີຂອງ ASEAN (AFTA), ກອງທຶນ ການເງິນສາກົນ (IMF), ທະນາຄານໂລກ (WB), ທະນາຄານພັດທະ ນາອາຊີ (ADB), ເອທີເສດຖະກິດອາຊີ-ປາຊີຟິກ (APEC). ອີງໃສ່ ແນວທາງນະໂຍບາຍຂອງພັກ ກ່ຽວກັບການເປີດກວ້າງການພົວພັນ ຮ່ວມມືເສດຖະກິດກັບຕ່າງປະເທດ, ລັດຖະບານໄດ້ສ້າງ ແລະ ປັບປຸງ ບັນດາລະບຽບການ ແລະ ນິຕິກຳຫຼາຍຢ່າງ ເພື່ອເປັນເຄື່ອງມືຂອງຕົນ ໃນການຄຸ້ມຄອງ ແລະ ທັງເປັນການສ້າງຄວາມໝັ້ນໃຈ ຕໍ່ຜູ້ລົງທຶນໃນ

ການດຳເນີນທຸລະກິດຢູ່ ສປປ ລາວ.

- ດ້ານການເງິນ: ລັດຖະບານ ສຸມໃສ່ປະຕິຮູບລະບົບການຄຸ້ມຄອງການເງິນແຫ່ງລັດ ດ້ວຍການສ້າງວິໄສທັດ 2030 ແລະຍຸດທະສາດພັດທະນາການເງິນແຫ່ງລັດ ຮອດປີ 2025 ໂດຍການປັບປຸງນະໂຍບາຍການເງິນ, ການສ້າງ ແລະປັບປຸງນິຕິກຳຂະແໜງການເງິນ, ການປະຕິຮູບລະບົບການຄຸ້ມຄອງການເກັບລາຍຮັບ, ການປະຕິຮູບລະບົບຄຸ້ມຄອງລາຍຈ່າຍ, ພັດທະນາຂະແໜງການເງິນເປັນທັນສະໄໝ, ການຄຸ້ມຄອງ ແລະ ພັດທະນາການຈັດຕັ້ງ-ບຸກຄະລາກອນ ແລະ ການເຂັ້ມງວດປະຕິບັດມາດຕະການການປະຢັດງົບປະມານ ຕາມຄຳສັ່ງເລກທີ 09/ນຍຮັດໃຫ້ການເກັບລາຍຮັບມີທ່າອ່ຽງເພີ່ມຂຶ້ນໃນແຕ່ລະປີ.

+ 2015/2016-2020, ສາມາດເກັບລາຍຮັບທັງໝົດໄດ້ 120,672 ຕື້ກີບ, ເທົ່າກັບ 99.0% ຂອງແຜນການ 5 ປີ (ທີ່ໄດ້ຮັບການດັດແກ້), ສະເລ່ຍເທົ່າກັບ 15.9% ຂອງ GDP; ລາຍຈ່າຍທັງໝົດປະຕິບັດໄດ້ 150,632 ຕື້ກີບ, ເທົ່າກັບ 95% ຂອງແຜນການ 5 ປີ (ທີ່ໄດ້ຮັບການດັດແກ້), ສະເລ່ຍເທົ່າ 19.8% ຂອງ GDP; ຂາດດຸນງົບປະມານ ສະເລ່ຍໄລຍະ 5 ປີ ຢູ່ໃນລະດັບ 3.9% ຂອງ GDP (ແຜນການ ບໍ່ເກີນ 5% ຂອງ GDP).

+ 2021-2024, ສາມາດເກັບລາຍຮັບທັງໝົດໄດ້ 175,993 ຕື້ກີບ, ເທົ່າກັບ 118.22% ຂອງແຜນການ, ສະເລ່ຍເທົ່າກັບ 17.4% ຂອງ GDP; ລາຍຈ່າຍທັງໝົດປະຕິບັດໄດ້ 161,569 ຕື້ກີບ, ເທົ່າກັບ 95.78% ຂອງແຜນການ, ສະເລ່ຍເທົ່າ 16.2% ຂອງ GDP; ຂາດດຸນງົບປະມານ ສະເລ່ຍໄລຍະ 4 ປີ ຢູ່ໃນລະດັບ 1.2% ຂອງ GDP (ກະຊວງການເງິນ, 2024).

- ດ້ານເງິນຕາ: ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ປະຕິບັດນະໂຍບາຍເງິນຕາ ໂດຍການນຳໃຊ້ເຄື່ອງມືທາງອ້ອມ ຄື: ອັດຕາດອກເບ້ຍພື້ນຖານຂອງທຫລ, ອັດຕາສ່ວນເງິນແຮຝາກບັງຄັບ ແລະ ເຄື່ອງມືຕະຫຼາດເປີດ, ໄປຄຽງຄູ່ກັບການປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ. ພ້ອມກັນນັ້ນ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ນຳໃຊ້ນະໂຍບາຍການເງິນທີ່ເຂັ້ມງວດຂຶ້ນເພື່ອຄວບຄຸມອັດຕາເງິນເຟີ້, ເຊັ່ນ: ໃນປີ 2020 ອັດຕາເງິນເຟີ້ແມ່ນຢູ່ທີ່ 3.19%, ແຕ່ໄດ້ເພີ່ມຂຶ້ນແບບກ້າວກະໂດດໃນປີ 2022 ເຖິງ 39.27% ເນື່ອງຈາກຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະການອ່ອນຄ່າຂອງເງິນກີບ. ຜ່ານການປັບປຸງນະໂຍບາຍຢ່າງມີປະສິດທິພາບ, ອັດຕາເງິນເຟີ້ໄດ້ຫຼຸດລົງມາຢູ່ໃນລະດັບ 16.86% ໃນທ້າຍປີ 2024 (ທະນາຄານແຫ່ງ ສປປ ລາວ, 2024). ເຊິ່ງສະແດງໃຫ້ເຫັນເຖິງຄວາມຄືບໜ້າທີ່ສຳຄັນໃນຄວາມພະຍາຍາມແກ້ໄຂບັນຫາເສດຖະກິດ ຂອງລັດຖະບານ ແຕ່ລະໄລຍະ.

ພ້ອມກັນນັ້ນ, ໄດ້ເອົາໃຈໃສ່ຄຸ້ມຄອງເງິນຕາຕ່າງປະເທດ ຕາມລະບຽບການຢ່າງເຂັ້ມງວດ ເປັນຕົ້ນການຄຸ້ມຄອງກະແສເງິນເຂົ້າ-ອອກປະເທດ ຜ່ານລະບົບທະນາຄານຢ່າງເປັນປົກກະຕິ, ຕິດຕາມ ກວດກາ ການເຄື່ອນໄຫວຂອງຮ້ານແລກປ່ຽນເງິນຕາ ທີ່ຢູ່ພາຍໃຕ້ການຄຸ້ມຄອງ, ປະສານກັບພາກສ່ວນກ່ຽວຂ້ອງເພື່ອຈຳກັດ ແລະ ສະ ກັດກັ້ນ ການເຄື່ອນໄຫວດຳເນີນທຸລະກິດ ແລກປ່ຽນເງິນຕາທີ່ບໍ່ສອດ ຄ່ອງກັບ ລະບຽບກົດຫມາຍ ແລະ ຊຸກຍູ້ທະນາຄານທຸລະກິດຂະ ຫຍາຍຕາ ໜ່າງບໍລິການໃຫ້ທົ່ວເຖິງ, ສ້າງຜະລິດຕະພັນໃໝ່ ແລະ ທັນການ ບໍລິການເປັນທັນສະໄໝ ເພື່ອສົ່ງເສີມການຊຳລະຜ່ານລະບົບ ທະນາຄານ ແລະ ຫຼຸດຜ່ອນການນຳໃຊ້ເງິນສົດ.

- ດ້ານການຄ້າ, ການບໍລິການ ແລະ ການລົງທຶນ ໄດ້ມີການ ປັບປຸງນິຕິກຳຕ່າງໆ ແລະ ເຊັນສັນຍາຮ່ວມມືກັບ ຫຼາຍປະເທດ ໃນໂລກ ສະແດງອອກຄື: ສປປ ລາວ ໄດ້ເຊັນສັນຍາຮ່ວມມືສອງຝ່າຍ ກ່ຽວກັບເສດຖະກິດແລະການຄ້າກັບ 15 ປະເທດຄື: ມົງໂກລີ, ໄທ, ມຽນມາ, ສປປ ເກົາຫຼີ, ສປ ຈີນ, ສສ ຫວຽດນາມ, ກຳປູເຈຍ, ມາເລເຊຍ, ອິນເດຍ, ລັດເຊຍ, ເບລາຣຸສ, ອາກຊັງຕິນ, ອາເມລິກາ, ຕວກກີ ແລະ ກູເວດ; ໄດ້ເຊັນສັນຍາຮ່ວມມືການຄ້າຫຼາຍຝ່າຍ-ຫຼາຍ ເຊັ່ນ: (ATIGA), ການບໍລິການ (AFAS), ການຮ່ວມລົງນາມໃນສັນຍາ ການລົງທຶນອາຊຽນ (ACIA); ສິ່ງທີ່ພົ້ນເດັ່ນແມ່ນການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ ໃນຕົ້ນປີ 2013 ໃນດ້ານການຄ້າ, ນັບແຕ່ປີ 1986 ຈົນຮອດປັດຈຸບັນ, ສປປ ລາວ ມີການພົວພັນການຄ້າກັບ ຫຼາຍກວ່າ 80 ປະເທດໃນໂລກ.

- ການພົວພັນຮ່ວມມືສາກົນ ຂອງ ສປປ ລາວ ໄດ້ມີບາດກ້າວ ຂະຫຍາຍຕົວດີສົມຄວນ ໂດຍສະເພາະ ການຮ່ວມມືສອງຝ່າຍກັບ ສສ ຫວຽດນາມ, ສປ ຈີນ, ລຸກຊຳບວກ, ຝຣັ່ງ, ໄທ, ອິດສະຕາລີ, ສະວິດ ເຊີແລນ, ສ. ເກົາຫຼີ ແລະ ຍີ່ປຸ່ນ ອັນພົ້ນເດັ່ນ ມີການແລກປ່ຽນ ຢ້ຽມຢາມເຊິ່ງກັນແລະກັນ ໃນທຸກລະດັບກັບ ສສ ຫວຽດນາມ, ການ ລົງນາມແຜນແມ່ບົດ ການຮ່ວມມືໜຶ່ງແລວ ໜຶ່ງເສັ້ນທາງ ລະຫວ່າງ ສປປ ລາວ ກັບ ສປ ຈີນ ແລະ ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ, ການລົງນາມເຊັນສັນຍາຂອບການຮ່ວມມືທາງດ້ານການເງິນລະຫວ່າງ ລັດຖະບານລາວ ແລະ ສະວິດເຊີແລນ. ການຮ່ວມມືຫຼາຍຝ່າຍ ໂດຍລວມແມ່ນສາມາດປະຕິບັດໄປຕາມຂອບແຜນການຮ່ວມມືຕ່າງໆ

IV. ຂໍ້ຈຳກັດຈຳນວນໜຶ່ງ ໃນການພັດທະນາພື້ນຖານເສດຖະ

ກົດຕະຫຼາດ ຕາມທິດສັງຄົມນິຍົມ ຢູ່ ສປປ ລາວ.

1). ພື້ນຖານເສດຖະກິດ-ເຕັກນິກຫຼ້າຫຼັງ. ເນື່ອງຈຸດເລີ່ມຕົ້ນ ຂອງປະເທດເຮົາເປັນປະເທດທີ່ທຸກຍາກ ເສດຖະກິດ-ເຕັກນິກ ຫຼ້າຫຼັງ, ລະດັບສັງຄົມຍັງຕ່ຳ, ພັດຖືກສົງຄາມທຳລາຍຢ່າງໜັກໜ່ວງ, ແຕ່ການພັດທະນາເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມແມ່ນ ເປົ້າໝາຍໃນການພັດທະນາເສດຖະກິດແຫ່ງຊາດ. ຕະຫຼອດໄລຍະ ເວລາອັນຍາວນານ ໃນປະຫວັດສາດຜ່ານມາ, ປະເທດພວກເຮົາໄດ້ ນຳໃຊ້ຕົວແບບເສດຖະກິດແຜນການລວມສູນ ທີ່ມີລັກສະນະ ເກື້ອກູນ, ເຊິ່ງຕົວແບບນີ້ກໍ່ສາມາດຍາດໄດ້ຜົນສຳເລັດອັນສຳຄັນ, ເປັນຕົ້ນແມ່ນຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງ ປະເທດຊາດໃນສະໄໝສົງຄາມ, ແຕ່ຕາມຫຼັງມາມັນໄດ້ສ່ອງແສງໃຫ້ ເຫັນເຖິງຈຸດອ່ອນ, ບົກພ່ອງ ແລະວຽກງານການນຳພາ-ຊີ້ນຳ ກໍ່ຍັງມີ ຂໍ້ຜິດພາດ. ສະນັ້ນ, ການເລືອກ ເຟັ້ນຕົວແບບເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ ຢູ່ປະເທດເຮົາ ແມ່ນຄວາມຈຳເປັນພາວະວິໄສ, ແມ່ນສິ່ງທີ່ແນ່ນອນໃນເງື່ອນໄຂການຫັນເປັນໂລກາພິວັດທາງດ້ານ ເສດຖະກິ.

2). ໂຄງປະກອບເສດຖະກິດດ້ານປະສິດທິຜົນຍັງຕ່ຳ. ອີງໃສ່ ແຕ່ການຂຸດຄົ້ນທ່າແຮງທີ່ມີໃນທຳມະຊາດເປັນຕົ້ນຕໍ, ພື້ນຖານຂອງ ເສດຖະກິດປະເທດພວກເຮົາ ຍັງແມ່ນພື້ນຖານເສດຖະກິດຜະລິດ ສິນ ຄ້ານ້ອຍທີ່ອີງໃສ່ຊັບພະຍາກອນທີ່ດິນ ແລະ ກຳລັງແຮງງານ ງ່າຍດາຍ; ສະພາບການຜະລິດນ້ອຍ, ມີລັກສະນະກຸ້ມຕົນເອງພໍໃຜພໍ ລາວເປັນທີ່ແຜ່ຫຼາຍ; ການນຳໃຊ້ຜົນສຳເລັດທາງດ້ານວິທະຍາສາດ ເຕັກໂນໂລຊີ, ໂດຍສະເພາະບັນດາແນວພັນພືດ, ສັດ ແລະ ການຫັນ ເປັນຊົນລະກະເສດຍັງບໍ່ທັນກວ້າງຂວາງ.

3). ລະດັບການຜະລິດສິນຄ້າຍັງຕ່ຳ. ການແບ່ງງານສັງຄົມ ຍັງ ບໍ່ທັນຂະຫຍາຍຕົວເທົ່າທີ່ຄວນ, ຈຳນວນປະຊາຊົນຫຼາຍກວ່າ 80% ດຳລົງຊີວິດຢູ່ຊົນນະບົດ, ອັດຕາສ່ວນແຮງງານຢູ່ຂົງເຂດຂະແໜງກະ ສິກຳ-ປ່າໄມ້ມີຈຳນວນຫຼາຍ; ການຜະລິດສະບຽງອາຫານທີ່ຜະລິດ ຮັບໃຊ້ຄອບຄົວ ຍັງແມ່ນຂະແໜງການຜະລິດຕົ້ນຕໍທີ່ກວມເອົາ ສ່ວນໃຫຍ່ຂອງເນື້ອທີ່ດິນທຳການຜະລິດ; ອັດຕາສ່ວນສະບຽງ ອາຫານທີ່ຜະລິດເປັນສິນຄ້າຍັງກວມສ່ວນໜ້ອຍ; ການປູກຝັງ-ລ້ຽງສັດ ຍັງບໍ່ທັນແຍກອອກຈາກກັນຢ່າງຂາດຕົວ ແລະ ການ ລ້ຽງສັດ ກໍ່ຍັງບໍ່ກາຍ ເປັນຂະແໜງການຜະລິດສະເພາະ, ອຸດສາຫະກຳປຸງແຕ່ງເຄື່ອງປ່າຂອງດົງຍັງອ່ອນນ້ອຍ, ພ້ອມນັ້ນ ຢູ່ ເຂດພູດອຍ, ເຂດຫ່າງໄກສອກຫຼີກຍັງແມ່ນເສດຖະກິດທຳມະຊາດ ກວມເອົາອັດຕາສ່ວນໃຫ່ຍ.

4). ບັນດາພາກສ່ວນເສດຖະກິດ ຍັງບໍ່ທັນເສີມຂະຫຍາຍ ບົດບາດຕັ້ງໜ້າຂອງຕົນ.

- ຂົງເຂດເສດຖະກິດຂອງລັດ, ເຖິງວ່າໄດ້ບູລິມະສິດ ແລະມີ ກົນໄກນະໂຍບາຍຫຼາຍພໍສົມຄວນ ແລະໄດ້ຮັບການຂະຫຍາຍຕົວສຸມ ໃສ່ບັນດາຂະແໜງ ແລະບັນດາຂົງເຂດຕົ້ນຕໍຂອງເສດຖະກິດ, ແຕ່ປະ ສິດທິຜົນການຜະລິດ-ທຸລະກິດ ຍັງອ່ອນແອ, ບໍ່ທັນເຮັດບົດບາດເປັນ ຫຼັກແຫຼ່ງ, ສ້າງພື້ນຖານໃຫ້ແກ່ການພັດທະນາໝັ້ນທ່ຽງ ແລະຍືນຍົງໃນ ເສດຖະກິດແຫ່ງຊາດ.

- ຂົງເຂດເສດຖະກິດຮ່ວມມື ຂອງປະຊາຊົນຂະຫຍາຍຕົວ ບໍ່ ທັນເຂັ້ມແຂງ ແລະຍັງພົບຫຼາຍບັນ ຫາໃນການເຄື່ອນໄຫວ, ຍາກໃນ ການເຂົ້າຫາແຫຼ່ງທຶນ, ຂໍ້ມູນຂ່າວສານ ແລະຕະຫຼາດ.

- ທ່າແຮງຂອງເສດຖະກິດເອກະຊົນຍັງຈຳກັດ, ຂະໜາດການ ຜະລິດ-ທຸລະກິດຍັງນ້ອຍ, ລະດັບການປະກອບອຸປະກອນເຕັກນິກ ແລະ ຄວາມສາມາດແກ້ງແຍ້ງຍັງຕ່ຳ.

- ບັນດາໂຄງການລົງທຶນຂອງຕ່າງປະເທດຍັງນ້ອຍ, ບໍລິມາດ ທຶນຈົດທະບຽນ ແລະປະຕິບັດຕົວຈິງຍັງຕ່ຳ, ສຸມໃສ່ແຕ່ຂະແໜງໄຟ ຟ້າ, ຂຸດຄົ້ນບໍ່ແຮ່; ປູກ ແລະປຸງແຕ່ງຢາງພາລາ, ກາເຟເປັນສ່ວນໃຫຍ່, ຜົນປະໂຫຍດເຊື່ອມຕໍ່ໄປຍັງບັນດາຂະແໜງ ແລະ ຂົງເຂດເສດຖະກິດ ອື່ນຍັງຈຳກັດ.

5). ການແຈກຢາຍ ແລະແຈກຢາຍຄືນໃໝ່ ລາຍຮັບແຫ່ງຊາດ ໃນລະບົບເສດຖະກິດຕະຫຼາດ ຍັງບໍ່ທັນໄປຕາມປະສິດທິຜົນທາງດ້ານ ເສດຖະກິດ, ເຮັດໃຫ້ກຸ່ມຄົນໃນສັງຄົມ ມີຄວາມຫຼຸດລົ້ນກັນໃນການ ຄອບຄອງຊັບສິນ ທີ່ເປັນປັດໄຈການຜະລິດ ເຊັ່ນ: ທີ່ດິນ, ທຶນຮອນ ແລະພາຫະນະການຜະລິດ. ລະດັບການພັດທະນາ ລະຫວ່າງ ຕົວເມືອງ ກັບຊົນນະບົດ ແມ່ນຍັງຫ່າງໄກກັນ, ເກີດມີຊ່ອງຫວ່າງ ໃນການຜັນ ແຍກເຮັດໃຫ້ຜູ້ຮ່ຳ ແລະ ຜູ້ທຸກຂົ້ນ.

6). ແຫຼ່ງທຶນເພື່ອການພັດທະນາຍັງຈຳກັດ, ທຶນສ່ວນໃຫຍ່ ແມ່ນຍັງອາໄສຈາກຕ່າງປະເທດ, ໂດຍສະເພາະການລົງທຶນໂດຍກົງ ຈາກຕ່າງປະເທດ, ການກູ້ຢືມ ແລະການຊ່ວຍເຫຼືອລ້າຈາກຕ່າງປະເທດ. ການອາໄສແຫຼ່ງທຶນຈາກຕ່າງປະເທດດັ່ງກ່າວເປັນສິ່ງທ້າທາຍໃນພາຍ ໜ້າ, ເປັນຕົ້ນແມ່ນບັນຫາຄວາມເປັນເຈົ້າຕົນເອງ, ບັນຫາການຂຶ້ນກັບ ປັດໄຈພາຍນອກ, ບັນຫາສັງຄົມ, ບັນຫາການຄຸ້ມຄອງ, ບັນຫາຜົນ ປະໂຫຍດ ແລະ ອື່ນໆ.

7). ການເຊື່ອມຕົວເຂົ້າສູ່ຕະຫຼາດພາກພື້ນ ແລະ ສາກົນໃນ ເງື່ອນໄຂການຂະຫຍາຍຕົວທາງດ້ານເສດຖະກິດສິນຄ້າຂອງປະເທດ ເຮົາຍັງຕ່ຳ ແລະ ອ່ອນນ້ອຍ; ການດຳເນີນການຫັນເປັນຫຼາຍທິດ, ຫຼາຍ

ຮູບຫຼາຍແບບກ່ຽວກັບການພົວພັນເສດຖະກິດກັບຕ່າງປະເທດ, ນຳ ໃຊ້ກຳລັງແຮງຂອງພາຍນອກ ເພື່ອເສີມຂະຫຍາຍກຳລັງແຮງພາຍໃນ ແນ ໃສ່ຍູ້ແຮງຂະບວນວິວັດແຫ່ງການຫັນເປັນອຸດສາຫະກຳ ແລະ ຫັນເປັນທັນສະໄໝ ຂອງພື້ນຖານເສດຖະກິດແຫ່ງຊາດ ຕາມທິດ ກ້າວຂຶ້ນສັງ ຄົມນິຍົມນັ້ນ ຍັງຈຳກັດ.

V. ບາງຂໍ້ສະເໜີໃນການພັດທະນາພື້ນຖານເສດຖະກິດ ຕະຫຼາດ ຕາມທິດສັງຄົມນິຍົມ ຢຸ່ ສປປ ລາວ ໃນຕໍ່ໜ້າ.

1). ສືບຕໍ່ຢຶດໝັ້ນການພັດທະນາເສດຖະກິດຕະຫຼາດຕາມ ທິດສັງຄົມນິຍົມ. ສປປ ລາວ ຕ້ອງຢືນຢັນທັດສະນະທີ່ວ່າ ເສດຖະກິດຕະ ຫຼາດ ແມ່ນຜະລິດຕະພັນແຫ່ງຄວາມສີວິໄລ ຂອງ ມວນມະນຸດ, ສ້າງເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ແມ່ນ ສ້າງເສດຖະກິດສິນຄ້າຫຼາຍພາກສ່ວນ ເຄື່ອນໄຫວຕາມກົນໄກ ຕະຫຼາດທີ່ມີການຄຸ້ມຄອງຂອງລັດ ພາຍໃຕ້ການນຳພາຂອງພັກ ຂອງ ຊົນຊັ້ນກຳມະກອນ. ການພັດ ທະນາເສດຖະກິດຕະຫຼາດຕາມທິດ ສັງຄົມນິຍົມ, ໃນນັ້ນ ກົນໄກຕະ ຫຼາດຕ້ອງໄດ້ໝູນໃຊ້ຢ່າງຄົບຖ້ວນ ເພື່ອເສີມຂະຫຍາຍທຸກແຫຼ່ງກຳ ລັງແຮງແລະມີປະສິດທິຜົນ, ແນໃສ່ ພັດທະນາພື້ນຖານເສດຖະກິດແບບຍືນຍົງ, ຍົກສູງຊີວິດການເປັນຢູ່ ຂອງປະຊາຊົນ, ສົ່ງເສີມການສ້າງຄວາມຮັ່ງມີຖືກກົດໝາຍ ໄປພ້ອມ ກັບການລົບລ້າງຄວາມທຸກຍາກ, ເພີ່ມທະວີຄວາມສາມັກຄີປອງດອງ ໃນສັງຄົມ ເພື່ອປະຕິບັດຈຸດໝາຍ" ປະຊາຊົນຮັ່ງມີເຜົ່າສຸກ, ປະເທດ ຊາດມັ່ງຄັ່ງເຂັ້ມແຂງ,ສັງຄົມປອງດອງ-ປະຊາທິປະໄຕ-ຍຸຕິທຳ-ສີວິໄລ, "ເສີມຂະຫຍາຍສິດເສລີພາບ ໃນການດຳເນີນທຸລະກິດຕາມ ລະບຽບກົດໝາຍ ຂອງພົນ ລະເມືອງທຸກຄົນ ເພື່ອສ້າງຄວາມຮັ່ງມີ ໃຫ້ຕົນເອງ ແລະ ປະກອບ ສ່ວນໃຫ້ສັງຄົມ.

2). ຍົກສູງຄວາມສາມາດ ແລະ ຄວາມສັກສິດແຫ່ງການຄຸ້ມ ຄອງເສດຖະກິດມະຫາພາກຂອງລັດ. ລັດຕ້ອງປະຕິບັດພາລະບົດ ບາດກຳນົດທິດ ໃຫ້ແກ່ການພັດທະນາດ້ານເສດຖະກິດໃຫ້ດີ, ກວດ ກາ, ຄວບຄຸມທຸກການເຄື່ອນໄຫວທາງດ້ານເສດຖະກິດ-ສັງຄົມ; ສ້າງ ແລະ ກຳນົດຂອບຂອງກົດໝາຍ ແລະ ນະໂຍບາຍຕ່າງໆ ເພື່ອ ເປັນເອກະພາບອັນໜຶ່ງອັນດຽວ, ລົງທຶນໂດຍກົງເຂົ້າໃສ່ບາງເຂດທີ່ ຈຳເປັນຮີບດ່ວນ ໂດຍສະເພາະແມ່ນໂຄງປະກອບພື້ນຖານໂຄງລ່າງ ເພື່ອສ້າງສະພາບແວດລ້ອມທີ່ໝັ້ນຄົງ ແລະ ສະດວກສະບາຍໃຫ້ຜູ້ ທຳການຜະລິດດຳເນີນທຸລະກິດ, ສະກັດກັ້ນທຸກປະກົດການຫຍໍ້ທໍ້ທີ່ ຈະເກີດຂຶ້ນ; ສືບຕໍ່ປັບປຸງດັດແກ້ບັນດາລະບົບລະບຽບການຂັ້ນຕອນ ດ້ານບໍລິຫານ ເພື່ອໃຫ້ລັດປະຕິບັດພາລະບົດບາດຄຸ້ມຄອງມະຫາ ພາກ ໄດ້ຢ່າງຖືກຕ້ອງ ແລະ ປະຕິບັດພາລະບົດບາດຜູ້ເປັນເຈົ້າຂອງ ຊັບສິນສ່ວນລວມຂອງຊາດ, ບໍ່ແຊກແຊງເຂົ້າໃນພາລະບົດບາດ ບໍລິຫານທຸລະກິດ ຂອງບັນດາວິສາຫະກິດ.

3). ສ້າງສະພາບແວດລ້ອມ, ໂຄງລ່າງພື້ນຖານທາງດ້ານວັດຖຸ ແລະ ນິຕິກຳຕ່າງໆ ທີ່ເອື້ອອຳນວຍຕໍ່ການດຳເນີນທຸລະກິດ, ການຄ້າ ພາຍໃນ ແລະ ຕ່າງປະເທດ, ການດຶງດູດການລົງທຶນ, ການເປັນໃຈກາງ ບໍລິການຜ່ານ ແລະ ການສ້າງຄວາມເຂັ້ມແຂງ ແລະ ຄວາມສາ ມາດ ແຂ່ງຂັນໃຫ້ແກ່ທຸກພາກສ່ວນເສດຖະກິດ ເພື່ອໃຫ້ເຂົາເຈົ້າສາ ມາດ ດຳເນີນທຸລະກິດໄດ້ຢ່າງສະເໝີພາບຕໍ່ໜ້າກົດໝາຍ, ສາມາດເຂົ້າເຖິງ ຕະຫຼາດພາກພື້ນ ແລະ ສາກົນຢ່າງສະດວກວ່ອງໄວ ແລະສາມາດໝູນ ໃຊ້ທ່າແຮງດ້ານການລົງທຶນ ແລະ ຜົນປະໂຫຍດດ້ານການເຊື່ອມໂຍງ ຕ່າງໆເຂົ້າໃນການພັດທະນາຕົນເອງ ກໍ່ຄືປະເທດຊາດຢ່າງມີປະສິດທິ ຜົນສູງ. ນອກຈາກນີ້, ຕ້ອງສືບຕໍ່ພັດທະນາລະບົບທະ ນາຄານພາຍໃນ ໃຫ້ຂະຫຍາຍຕົວໃນຫຼາຍຮູບຫຼາຍສີ ເພື່ອໃຫ້ເປັນ ແຫຼ່ງທຶນພາຍໃນທີ່ ສາມາດເຂົ້າເຖິງງ່າຍ, ຂະຫຍາຍຮູບແບບການໃຫ້ສິນເຊື່ອໃຫ້ກວ້າງ ຂວາ ແລະ ສາມາດເຂົ້າເຖິງໄດ້ໂດຍວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເຊັ່ນ: ນຳໃຊ້ຮູບແບບການເງິນຈຸນລະ ພາກ ແລະ ມີ ນະໂຍບາຍສິນເຊື່ອພິເສດຕໍ່ວິສາຫະກິດດັ່ງກ່າວ.

4). ຮັບປະກັນການພັດທະນາຊັບພະຍາກອນມະນຸດ ສອດຄ່ອງກັບການພັດທະນາເສດຖະກິດ, ຕອບສະໜອງໄດ້ຕາມ ຄວາມຕ້ອງການພັດທະນາເສດຖະກິດພາຍໃນ ແລະ ເຊື່ອມຕໍ່ກັບພາກ ພື້ນ ແລະ ສາກົນ.ສ້າງ ແລະ ດຸ່ນດ່ຽງແຮງງານທີ່ມີສີມືໃຫ້ພຽງພໍ, ມີ ຄຸນນະພາບສູງ, ຮອງຮັບການພັດທະນາເສດຖະກິດ ໃນຍຸກໃໝ່ແຫ່ງ ການເຊື່ອມໂຍງເສດຖະ ກິດກັບພາກພື້ນ ແລະ ສາກົນ; ຕ້ອງມີການ ກຳນົດບຸລິມະສິດຂອງການພັດທະນາຂອງຂະແໜງການຕ່າງໆ ໃນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ຊັດເຈນ, ໂດຍມີການ ຄາດຄະເນຄວາມຕ້ອງການດ້ານແຮງງານ ແລະ ຊັບພະຍາກອນຕ່າງໆ ເພື່ອໃຊ້ເຂົ້າໃນການພັດທະ ນາ ແລະ ຮອງຮັບການເຊື່ອມໂຍງກັບພາກ ພື້ນ ແລະ ສາກົນ. ໃນເວລາດຽວກັນ, ການວາງແຜນກ່ຽວກັບການ ພັດທະນາຊັບພະຍາກອນມະນຸດ ຕ້ອງໃຫ້ສອດຄ່ອງກັບທິດທາງການ ພັດທະນາລວມ ແລະ ການພັດທະ ນາຕາມຂະແໜງການຜະລິດ ກໍ່ຄື ຕາມການຄາດຄະເນຄວາມຕ້ອງການດັ່ງກ່າວນັ້ນ.

5). ສືບຕໍ່ຄຸ້ມຄອງເສດຖະກິດມະຫາພາກໃຫ້ມີສະຖຽນລະ ພາບ ໂດຍມີການຄຸ້ມຄອງ, ດັດສົມລາຄາສິນຄ້າທີ່ຈຳເປັນ ເພື່ອບໍ່ໃຫ້ ກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ; ສືບຕໍ່ປະຕິບັດນະໂຍບາຍ ຮັກສາສະ ຖຽນລະພາບທາງດ້ານອັດຕາແລກປ່ຽນຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງຂອງລັດ ແລະ ດຳເນີນນະໂຍບາຍເງິນຕາແບບປະສົມ

ປະສານ; ເອົາໃຈໃສ່ຕິດຕາມການໝູນວຽນຂອງປະລິມານເງິນ (M2) ຢ່າງໃກ້ ຊິດ, ສຶກສາທິດທາງການນຳໃຊ້ນະໂຍບາຍທາງດ້ານເງິນຕາ (ອັດຕາດອກເບ້ຍ ແລະ ການຂະຫຍາຍ (M2) ໃຫ້ສອດຄ່ອງກັບທ່າ ອ່ຽງຂອງເສດຖະກິດ; ຮັບປະກັນການປ່ອຍສິນເຊື່ອ ເພື່ອຊຸກຍູ້ ແລະ ສົ່ງເສີມການຂະຫຍາຍຕົວ ຂອງເສດຖະກິດ, ພ້ອມທັງ ຫຼີກລ່ຽງການປ່ອຍສິນເຊື່ອບໍ່ຖືກເປົ້າໝາຍ ແລະ ວິໄຈຢ່າງເລິກເຊິ່ງ ເຖິງສາເຫດທີ່ພາໃຫ້ປະລິ ມານເງິນເພີ່ມຂຶ້ນ, ລວມທັງຄວາມສ່ຽງ ຕ່າງໆຕໍ່ສະຖຽນລະພາບທາງດ້ານການເງິນ-ເງິນຕາ. ຊຸກຍູ້ການຜະລິດ ສະບຽງອາຫານໃຫ້ພຽງພໍ, ດຸ່ນດ່ຽງການນຳເຂົ້າສິນຄ້າທີ່ຈຳເປັນ ເພື່ອ ຕອບສະໜອງຄວາມຕ້ອງ ການພາຍໃນ.

ສະນັ້ນ, ການພັດທະນາເສດຖະກິດຕະຫຼາດ ຕາມທິດສັງຄົມ ນິຍົມ ແມ່ນການຫັນຈາກກົນໄກລວມສູນອາດຍາສິດເກື້ອກູນ ໄປສູ່ ກົນໄກຕະຫຼາດ ແລະ ການເປີດກວ້າງການເຊື່ອມໂຍງເສດຖະກິດກັບ ຕ່າງປະເທດ ໄດ້ຢ່າງສຳເລັດຜົນ. ພ້ອມກັນນັ້ນ, ປັດໄຈຕ່າງໆ ຂອງ ເສດຖະກິດຕະຫຼາດກໍ່ເລີ່ມເກີດຂຶ້ນເປັນລຳດັບ, ຫຼາຍປະເພດຕະຫຼາດ ໄດ້ກຳເນີດຂຶ້ນ ຄື: ຕະຫຼາດສິນຄ້າ ແລະ ບໍລິການ, ຕະຫຼາດແຮງງານ, ຕະຫຼາດການເງິນ, ຕະຫຼາດຫຼັກຊັບ ແລະ ຕະຫຼາດວິທະຍາສາດ-ເຕັກ ໂນໂລຊີ; ສິ່ງເຫຼົ່ານີ້ ໄດ້ສ້າງປັດໄຈສຳຄັນປະກອບສ່ວນເຂົ້າໃນຜົນ ສຳເລັດອັນຍິ່ງໃຫຍ່ ແຫ່ງພາລະກິດການພັດທະນາເສດຖະກິດຕະ ຫຼາດ ຕາມທິດສັງຄົມນິຍົມ ຂອງພວກເຮົາ.

ເອກະສານອ້າງອີງ

ກະຊວງການເງິນ. (2024). *ສັງລວມຂໍ້ມູນ ກ່ຽວກັບການເກັບລາຍ ຮັບ ໄລຍະ 4 ປີ (2021-2024).*

ກະຊວງແຜນການ ແລະ ການລົງທຶນ. (2024). *ບົດລາຍງານຫຍໍ້ ກ່ຽວກັບການສະຫຼຸບຂາດຕົວ ລວມຍອດຜະລິດຕະພັນພາຍ ໃນ (GDP) ປີ 2023 ແລະ ຄາດຄະເນສະພາບທ່າອ່ຽງເສດຖະ ກິດ ປີ 2024 ຂອງ ສປປ ລາວ.*

ສູນສະຖິຕິແຫ່ງຊາດ. (2023). *ປຶ້ມສະຖິຕິປະຈຳປີ 2023.* ກະຊວງການເງິນ.

ທະນາຄານແຫ່ງ ສປປ ລາວ. (2024). *ປຶ້ມສັງລວມບົດລາຍງານ ອັດຕາແລກປ່ຽນເງິນຕາຕ່າງປະເທດ ປະຈຳປີ 2024.* ທະນາຄານແຫ່ງ ສປປລາວ.

ອາລະສານອາລຸນໃໝ່. (1986). *ເອກະສານກອງປະຊຸມໃຫຍ່ ຄັ້ງ ທີ IV ຂອງພັກປະຊາຊົນປະຕິວັດລາວ.*

ອາລະສານອາລຸນໃໝ່. (1996). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ VI ຂອງພັກປະຊາຊົນປະຕິວັດລາວ.* ໂຮງພິມແຫ່ງລັດ.

ອາລະສານອາລຸນໃໝ່. (2001). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ VII ຂອງພັກປະຊາຊົນປະຕິວັດລາວ.* ໂຮງພິມແຫ່ງລັດ.

ອາລະສານອາລຸນໃໝ່. (2006). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກປະຊາຊົນປະຕິວັດລາວ.* ໂຮງພິມແຫ່ງລັດ.

ອາລະສານອາລຸນໃໝ່. (20011). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ.*

ອາລະສານອາລຸນໃໝ່. (2016). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ X ພັກປະຊາຊົນປະຕິວັດລາວ.*

ອາລະສານອາລຸນໃໝ່. (2021). *ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນປະຕິວັດລາວ.*

ອາລະສານອາລຸນໃໝ່. (2021). ເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນປະຕິວັດລາວ, *ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025).*